ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສໍານັກງານໃຫຍ່

ເລກທີ: 53 /ທຄຕລ ສພທ

ນະຄອນຫຼວງວຽງຈັນ, ວັນທີ: 14 ພະຈິກ 2024

**ມະຕິ**

**ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝວິສາມັນ**

**ຄັ້ງທີ 6 ປະຈໍາປີ 2024, ວັນທີ 14/11/2024**

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນຄັ້ງທີ 6 ປະຈໍາປີ 2024 (ຕໍ່ໄປນີ້ເອີ້ນວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 09:00-11:30 ໂມງ ຂອງວັນທີ 14 ພະຈິກ 2024 ທີ່ສໍານັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ບຸນປອນ ວັນນະຈິດ ປະທານສະພາບໍລິຫານ. ມີສະມາຊິກສະພາບໍລິຫານຈໍານວນ 06 ທ່ານ ເຂົ້າຮ່ວມ (ໃນນີ້ ມີກໍາມະການສະພາບໍລິຫານຈໍານວນ 02 ທ່ານ ບໍ່ສາມາດເຂົ້າຮ່ວມກອງປະຊຸມຄື: ທ່ານ ສອນໄຊ ສີລາເພັດ ແລະ ຜູ້ຕາງໜ້າຂາຮຸ້ນຍຸດທະສາດ ບໍ່ສາມາດເຂົ້າຮ່ວມກອງປະຊຸມໃນຄັ້ງນີ້), ມີຄະນະອໍານວຍການ ແລະ ພະແນກກ່ຽວຂ້ອງ ເຂົ້າຮ່ວມເປັນຜູ້ສັງເກດການ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

1. ຮັບຊາບລາຍງານ ກ່ຽວກັບ ການອະນຸມັດສິນເຊື່ອ ຫຼັກຊັບບໍ່ພຽງພໍ ແລະ ການທົບທວນມູນຄ່າຫຼັກຊັບ ທີ່ບໍ່ພຽງພໍ ໃນຊ່ວງທົບທວນສິນເຊື່ອ;
2. ຮັບຮອງການສະເໜີຂໍຊື້ລະບົບໜ່ວຍແມ່ຂ່າຍ Server ແລະ ອຸປະກອນໄອທີ ເພື່ອຮອງຮັບການຂະຫຍາຍ ຕົວຂອງລະບົບ ໃນອະນາຄົດ;
3. ຮັບຮອງດ້ານຫຼັກການກ່ຽວກັບການລິເລີ່ມຄົ້ນຄວ້າໂຄງການປຸກສ້າງອາຄານສໍານັກງານໃຫຍ່ຫຼັງໃໝ່ ຂອງ ທຄຕລ;
4. ຮັບຮອງການສະເໜີຂໍຫຼຸດອັດຕາດອກເບ້ຍເງິນກູ້ຂອງລູກຄ້າບໍລິສັດ 1 ລາຍ;
5. ຮັບຊາບລາຍງານການປະຕິບັດເງື່ອນໄຂສັນຍາເງິນກູ້ຂອງລູກຄ້າບໍລິສັດ 1 ລາຍ.

**ປະທານສະພາບໍລິຫານ**

**ບຸນປອນ ວັນນະຈິດ**